ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ວັນທີ ໑໔ ມິຖຸນາ ໒໐໐໙.**

# ຖແລງການ

## ສນັບສນູນຄຳປະກາດ ຂອງ ປະທານາທິບໍດີ ສະຫະຣັດ ກ່ຽວກັບລາວ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ໄດ້ອອກຖແລງການສບັບນີ້, ເພື່ອ ສນັບສນູນ ຄຳປະກາດ ຂອງ ທ່ານປະທານາທິບໍດີ Barack Obama ໃນວັນທີ 12 ມິຖຸນາ 2009 ທີ່ວ່າ " ລາວ ໄດ້ຢຸດເຊົາ ເປັນປະເທດ Marxist Leninist ແລ້ວນັ້ນ ຢ່າງສຸດຊຶ້ງ!.

ຄຳປະກາດ ຂອງ ທ່ານ Barack Obama, ມັນບໍ່ພຽງແຕ່ ຊີ້ໃຫ້ເຫັນ ເຖິງຄວາມປາຖນາດີ ຂອງປະທານະທິບໍດີສະຫະຣັດ ທີ່ຢາກໃຫ້ລາວ ໄດ້ຮັບການພັທນາທາງດ້ານສິດທິ, ທາງດ້ານສັງຄົມ ວັທນະທັມ ແລະດ້ານ ເສຖກິດ, ເພື່ອຄວາມອຸດົມສົມບູນ ແລະຄວາມຢູ່ເຢັນເປັນສຸຂ ຂອງພົລເມືອງລາວ ເທົ່ານັ້ນ, ມັນຍັງກວມໄປເຖິງ ຢາກໃຫ້ມີສັນຕິພາບ ອັນແທ້ຈິງ ແລະສັນຕິສຸຂ ອັນຍາວນານ ເກີດມີຂຶ້ນ ຢູ່ໃນພູມີພາກສ່ວນນີ້ ຂອງໂລກອີກດ້ວຍ.

ການຍອມຮັບເອົາ ນະໂຍບາຍແກ້ໄຂບັນຫາລາວ ແບບສັນຕິວິທີ ຢ່າງບໍ່ມີເງື່ອນໄຂໃດໆ ອອກມາ ຕອບໂຕ້ ຂອງພັກ ປະຊາຊົນປະຕິວັດລາວ ແລະຣັຖບານ ຕາມທີ່ສະຫະຣັດ ໄດ້ປະກາດອອກມານັ້ນ, ມັນແມ່ນ ໄຊຊນະອັນໃຫຍ່ຫລວງ ຂອງປະຊາຊົນລາວທັງຊາດ... ທັງໆທີ່ທ່ານ ບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ໄດ້ປະກາດ ຢ່າງຈະແຈ້ງ ຢູ່ປະເທດ ສິງກະໂປ ໃນທ້ອງເດືອນ ພຶສຈິກາ 2007 ວ່າ "ເປົ້າໝາຍຂອງລາວ ແມ່ນເລັ່ງສ້າງພລັງງານໄຟຟ້ານ້ຳຕົກ...ບໍ່ແມ່ນສ້າງປະຊາທິປະໄຕ" (Reuters 11/18/07) -ຢູ່ລາວ ບໍ່ມີປະຊາທິປະໄຕ...ມີແຕ່ ສັງຄົມນິຍົມ ຄອມມິວນິສຢ່າງດຽວ (VOA 11/21/07). ພັກຣັດ ກໍບໍ່ໄດ້ໃສ່ໃຈ, ມຸ້ງໜ້ານຳພາຊາດ, ນຳພາປະຊາຊົນ ອອກໄປສູ່ແສງສວ່າງ ແຫ່ງຄວາມມີອິສຣະພາບ ດ້ວຍຄວາມກ້າຫານໄດ ້ດັ່ງນີ້ ກໍເປັນໜ້າຍ້ອງຍໍສັລເສີນທີ່ສຸດ!.

ການຍອມຮັບເງື່ອນໄຂຂໍ້ຕົກລົງຕ່າງໆ...ເພື່ອແກ້ໄຂບັນຫາລາວ ແບບສັນຕິວິທີ ຕາມທີ່ສະຫະຣັດ ໄດ້ປະກາດອອກມາ ວ່າ " ລາວໄດ້ຢຸດເຊົາ ເປັນປະເທດ Marxist Leninist ຊຶ່ງບໍ່ມີຜູ້ໃດຄາດຄິດ ມາກ່ອນນັ້ນ, ມັນກໍແມ່ນການເສັຽສລະອັນໃຫຍ່ຫລວງ ເພື່ອປະເທດຊາດ, ເພື່ອປະຊາຊົນ ຂອງ ພັກ ປະຊາຊົນ ປະຕິວັດລາວ ແລະຣັຖບານ ຢ່າງໜ້າພາກພູມໃຈ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍພ້ອມແລ້ວ ທີ່ຈະປະຕິບັດຕາມ ທຸກເງື່ອນໄຂ ທີ່ສາກົນ ໄດ້ກຳນົດໄວ້ ໃນການສ້າງຄວາມສາມະຄີປອງດອງຊາດ ຕາມແນວທາງສັນຕິວິທີນັ້ນ ທຸກປະການ, ເພື່ອພ້ອມກັນ ຜ່ານຜ່າທຸກອຸປສັກນາໆປະການ...ໂດຍແນໃສ່ ການແກ້ໄຂບັນຫາ ທີ່ມີຢູ່ນີ້ ໃຫ້ລຸໂລ່ງໄປໄດ້ດ້ວຍດີ, ເຮັດໃຫ້ ການແກ້ໄຂບັນຫາລາວ ຄັ້ງຍິ່ງໃຫຍ່ໃນປວັດສາດນີ້, ເປັນໄຊຊະນະລວມ ແລະໝັ້ນຄົງຖາວອນ ຂອງປະຊາຊົນລາວທັງຊາດ.

ສຸດທ້າຍນີ້, ໃນນາມຂອງພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ແລະໃນນາມ ຂອງຂ້າພະເຈົ້າເອງ, ຂໍສແດງຄວາມຂອບອົກຂອບໃຈ ນຳທ່ານ Barack Obama ແລະ ປະຊາຊົນ ອະເມຣິກັນ, ທີ່ຍາມໃດ ກໍໃຫ້ການຊ່ວຍເຫລືອ, ເປັນເພື່ອນມິດທີ່ດີ, ເປັນຫ່ວງເປັນໃຍນຳ ຄວາມທຸກຍາກລຳບາກ ຂອງປະຊາຊົນລາວ ແລະ ຜັກດັນໃຫ້ມີການແກ້ໄຂບັນຫາລາວ ຕາມແນວທາງ ສັນຕິວິທີນີ້ ມາໂດຍຕລອດ ເພື່ອກອບກູ້ເອົາຊີວິດການເປັນຢູ່ ຂອງປະຊາຊົນລາວ ອອກຈາກຄວາມ ມືດມົນ, ອອກຈາກ ຄວາມຍາກຈົນ ແລະຄວາມອຶດຫິວ ທີ່ມີຢູ່ນັ້ນ ໃຫ້ໄດ້ພົບກັບແສງສວ່າງ ແຫ່ງຄວາມມີອິສຣະພາບອັນແທ້ຈິງ ແລະໄດ້ພົບກັບສັນຕິສຸກອັນຍາວນານ.

ຂໍຂອບໃຈ.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງການປະທານພັກ**
**ອາຈານ ສົມນຶກ ຟອງສູວັນ**
**ວັນທີ ໒໒ ມິຖຸນາ ໒໐໐໙.**